ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------------

ທະນາຄານແຫ່ງ ສປປ ລາວ

ເລກທີ 01 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 26 JAN 2017

ສຳນັກງານ ຄຄຊ
0122
30 JAN 2017
021 217770

**ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ**
**ປະຈຳເດືອນ 12/2016 ແລະ ທິດທາງແຜນການໃນຕໍ່ໜ້າ**

**ພາກທີ I**

**ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງທະນາຄານໃນໄລຍະຜ່ານມາ**

## I. ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນນອ່ຽງທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນທັນວາ 2016 ແລະ ທິດທາງແຜນການໃນເດືອນ ມັງກອນ 2017 ດັ່ງລາຍລະອຽດລຸ່ມນີ້:

## II. ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງທຫລ.

- ສຳເລັດການຈັດກອງປະຊຸມ ແລະ ສຳມະນາຕ່າງໆ: ກອງປະຊຸມສະພາບໍລິຫານ ທະນາຄານແຫ່ງ ສປປ ລາວ; ກອງປະຊຸມສະພາບໍລິຫານສະຖາບັນທະນາຄານ; ກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ຄັ້ງທີ 4 ປະຈຳປີ 2016; ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ 3 ປະຈຳປີ 2016; ກອງປະຊຸມທະວິພາຄີ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງຊາດກຳປູເຈຍ; ກອງປະຊຸມເຜີຍແຜ່ວິທີການນຳໃຊ້ໂປຣແກຼມການຊື້-ຂາຍເງິນຕາຕ່າງປະເທດ (ໂປຣແກຼມປັບປຸງໃໝ່) ໃຫ້ແກ່ທະນາຄານທຸລະກິດ; ກອງປະຊຸມຮ່ວມມືສອງຝ່າຍ ລະຫວ່າງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຄະນະກຳມະການຄຸ້ມຄອງຫຼັກຊັບ ສສ ຫວຽດນາມ; ກອງປະຊຸມເຜີຍແຜ່ວຽກງານຫຼັກຊັບ ຢູ່ສູນພັດທະນາສີມືແຮງງານ; ກອງປະຊຸມປຶກສາຫາລືກ່ຽວກັບການຮ່າງດຳລັດວ່າດ້ວຍການປົກປ້ອງເງິນຝາກຮ່ວມກັບກະຊວງຍຸດຕິທຳ; ສຳມະນາຮ່ວມກັບບໍລິສັດຫຼັກຊັບ ເອພີເອັມລາວຈຳກັດ ໃນຫົວຂໍ້: ການກະກຽມຄວາມພ້ອມ ເພື່ອລະດົມທຶນຜ່ານຕະຫຼາດທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ;
- ເຂົ້າຮ່ວມກອງປະຊຸມເຜີຍແຜ່ແນະນຳການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາປີ 2017; ສຳເລັດການເປັນປະທານກອງປະຊຸມ ຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ +3 ທີ່ກຸຍຢາງ ສປ ຈີນ;
- ສຳເລັດການຈັດພິທີສິ່ງທ້າຍປີເກົ່າ ແລະ ຕ້ອນຮັບປີໃໝ່ໃຫ້ການນຳຂອງ ທຫລ ແລະ ບັນດາກົມຕ່າງໆກໍ່ໄດ້ມີການຈັດພິທີດັ່ງກ່າວບົນພື້ນຖານຈິດໃຈປະຫຍັດ.

## III. ສະພາບພົ້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບ ໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. ສະພາບເສດຖະກິດເງິນຕາສາກົນ.

– ໃນເດືອນ 12/2016 ສະພາບເສດຖະກິດໂລກຍັງສືບຕໍ່ມີການປ່ຽນແປງ ພາຍຫຼັງຜົນການເລືອກຕັ້ງປະທານາທິບໍດີ ສ.ອາເມລິກາ ຊຶ່ງຕະຫຼາດຄາດວ່າເສດຖະກິດຂອງ ສ. ອາເມລິກາ ຈະຂະຫຍາຍຕົວຫຼຸດລົງ, ເຖິງຢ່າງໃດກໍ່ຕາມ ມູມມອງຂອງຕະຫຼາດ ເລີ່ມກັບມາໃນທິດທາງບວກ ເຫັນໄດ້ຈາກຕົວເລກເສດຖະກິດສ່ວນຫຼາຍໄດ້ປັບຕົວດີຂຶ້ນຢ່າງຕໍ່ເນື່ອງ. ພ້ອມນີ້, ເຄື່ອງຊີ້ວັດທາງເສດຖະກິດຂອງຂົງເຂດເອີຣົບ (Euro Zone) ຍັງສົ່ງສັນຍານໃນການຟື້ນຕົວຂອງເສດຖະກິດຢ່າງຕໍ່ເນື່ອງ ເປັນຕົ້ນການສົ່ງອອກທີ່ຂະຫຍາຍຕົວ ໄດ້ເປັນແຮງໜູນໃຫ້ຜົນການຜະລິດອຸດສາຫະກຳເພີ່ມຂຶ້ນສູງສຸດໃນຮອບ 34 ເດືອນ ແລະ ອັດຕາເງິນເຟີ້ມີທ່າອ່ຽງເພີ່ມຂຶ້ນ ໃນຮອບ 31 ເດືອນ;

– ເງິນໂດລາແຂງຄ່າ 3,02% ທຽບເອີໂຣ ເນື່ອງຈາກທະນາຄານກາງສະຫະພາບເອີຣົບ (ECB) ຍັງສືບຕໍ່ຮັກສາອັດຕາດອກເບ້ຍນະໂຍບາຍ ຢູ່ທີ່ລະດັບ 0% ແລະ ໄດ້ຕົກລົງຂະຫຍາຍເວລາມາດຕະການ (QE) ອອກໄປອີກ 09 ເດືອນ; ສຳລັບເສດຖະກິດຂອງສະຫະລັດອາເມລິກາ ແມ່ນມີທ່າອ່ຽງຂະຫຍາຍຕົວດີຂຶ້ນ ຊຶ່ງເຫັນໄດ້ຈາກຕົວເລກດັດຊະນີລາຄາຜູ້ບໍລິໂພກຂອງສະຫະລັດ ປັບຕົວເພີ່ມຂຶ້ນ 98 ໃນເດືອນ 12/2016 ແລະ ຕົວເລກການຂໍສະຫວັດດີການການຫວ່າງງານກໍຂະຫຍາຍຕົວຫຼຸດລົງ 100.000 ຄົນ ແລະ ໄດ້ມີການຄາດການວ່າທະນາຄານກາງສະຫະລັດ (FED) ອາດຈະປັບຂຶ້ນອັດຕາດອກເບັ້ນນະໂຍບາຍ ພາຍຫຼັງການປະຊຸມປະຈຳເດືອນ ໃນລະຫວ່າງວັນທີ 13-14 ທັນວາ 2016;

– ລາຄານ້ຳມັນ ຫຼຸດລົງ 0,45% ເປັນ 49,09 ໂດລາ/ບາເຣວ ເນື່ອງຈາກນັກລົງທຶນຍັງມີຄວາມກັງວົນກ່ຽວກັບການສະການສະໜອງນ້ຳມັນທີ່ເກີນຄວາມຕ້ອງການຂອງຕະຫຼາດ ພາຍຫຼັງກຸ່ມປະເທດໂອເປັກ ແລະ ລັດເຊຍມີການເພີ່ມກຳລັງການຜະລິດນ້ຳມັນຂຶ້ນໃນເດືອນ 11/2016 ໂດຍທີ່ປະລິມານການຜະລິດນ້ຳມັນລວມກັນສູງເຖິງ 95 ລ້ານບາເຣວ/ວັນ ຊຶ່ງກວມເອົາປະມານ 50% ຂອງປະລິມານຄວາມຕ້ອງການນ້ຳມັນຂອງໂລກ. ສ່ວນລາຄາຄຳຫຼຸດລົງ 6,52% ເປັນ 1.191,73 ໂດລາ/ອອນ.

### 2. ສະພາບເງິນຕາພາຍໃນ.

– ອັດຕາເງິນເຟີ້ປະຈຳເດືອນ 12/2016 (ຕົວເລກຄາດຄະເນ) ຢູ່ໃນລະດັບ 2,49%;

– ຖານເງິນຕາປະຈຳເດືອນ 12/2016 ເພີ່ມຂຶ້ນ 410,27 ຕື້ກີບ ຫຼື 1,24% ທຽບໃສ່ເດືອນ 11/2016, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 371,41 ຕື້ກີບ ຫຼື 1,13%. ສາເຫດຕົ້ນຕໍຍ້ອນ ທຫລ ລ່ວງໜ້າໃຫ້ລັດຖະບານ ຈຳນວນ 2.000 ຕື້ກີບ; ທຫລ ປ່ອຍສິນເຊື່ອໃຫ້ໂຄງການບູລິມະສິດຂອງລັດ ຈຳນວນ 42 ລ້ານໂດລາສະຫະລັດ ເຖິງແມ່ນວ່າທະນາຄານທຸລະກິດ ຖອນເງິນອອກນຳໃຊ້ ສຸດທິ 58,81 ລ້ານໂດລາສະຫະລັດ ແລະ ທະນາຄານທຸລະກິດໂອນເງິນໄປຕ່າງປະເທດສຸດທິ 54,64 ລ້ານໂດລາສະຫະລັດ. ປະລິມານເງິນ M2 ເພີ່ມຂຶ້ນ 928,52 ຕື້ກີບ ຫຼື 1,35% ທຽບໃສ່ເດືອນ 11/2016 ແລະ ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7.689,65 ຕື້ກີບ ຫຼື 12,39%;

– ອັດຕາແລກປ່ຽນທົ່ວລະບົບ ໃນເດືອນ 12/2016[1] ທຽບເດືອນ 11/2016[2] ໝັ້ນຄົງໃນຂອບທີ່ກຳນົດໄວ້ເຫັນໄດ້ຈາກເງິນກີບອ່ອນຄ່າ 0,13% ທຽບເງິນໂດລາ ແຕ່ແຂງຄ່າ 1,03% ທຽບເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າ 1,78% ທຽບກັບເງິນໂດລາ ແລະ ອ່ອນຄ່າ 3,16% ທຽບເງິນບາດ;

---

1 ອັດຕາແລກປ່ຽນສະເລ່ຍຂອງວັນທີ 14/11/2016-13/12/2016

2 ອັດຕາແລກປ່ຽນສະເລ່ຍຂອງວັນທີ 14/10/2016-11/11/2016

– ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 12/2016 (ແຕ່ວັນທີ 14/11-12/12/2016) ເຫັນວ່າ ເພີ່ມຂຶ້ນ 2,69% ເນື່ອງຈາກປະລິມານຄວາມຕ້ອງການເພີ່ມຂຶ້ນ. ຄວາມຕ້ອງການຫຼາຍກວ່າການຕອບສະໜອງເຫັນໄດ້ຈາກ ທທກ ຂາຍສຸດທິ 92,72 ລ້ານໂດລາສະຫະລັດທຽບເທົ່າ, ໃນນັ້ນຂາຍເງິນບາດສຸດທິ 6.033,49 ລ້ານບາດ ຫຼື 188,13 ລ້ານໂດລາສະຫະລັດທຽບເທົ່າ ແຕ່ຊື້ໂດລາສຸດທິ 95,41 ລ້ານໂດລາສະຫະລັດ. ທຫລ ຂາຍເງິນຕາຕ່າງປະເທດໃຫ້ ທທກ ສຸດທິ 62,64 ລ້ານໂດລາສະຫະລັດທຽບເທົ່າ, ໃນນັ້ນ ຂາຍໂດລາ ສຸດທິ 55,52 ລ້ານໂດລາສະຫະລັດ ແລະ ຂາຍເງິນບາດສຸດທິ 228,55 ລ້ານບາດ ຫຼື 7,12 ລ້ານໂດລາສະຫະລັດທຽບເທົ່າ;

– ດຸນການຊຳລະກັບຕ່າງປະເທດປະຈຳເດືອນ 12/2016 (ແຕ່ວັນທີ 14/11-09/12/2016) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 71,92 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼອອກ 473,72 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ມາຈາກການຊຳລະຄ່າສິນຄ້ານຳເຂົ້າຂອງວິສາຫະກິດ ຈຳນວນ 211,29 ລ້ານໂດລາສະຫະລັດ ແລະ ຊຳລະເງິນກູ້ຢືມຈາກຕ່າງປະເທດຂອງທະຄານທຸລະກິດ ຈຳນວນ 177,85 ລ້ານໂດລາສະຫະລັດ. ສ່ວນກະແສເງິນໄຫຼເຂົ້າຈຳນວນ 401,80 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ແມ່ນໄດ້ຈາກການສົ່ງອອກສິນຄ້າຂອງວິສາຫະກິດຈຳນວນ 166,08 ລ້ານໂດລາສະຫະລັດ ແລະ ເງິນກູ້ຢືມຈາກຕ່າງປະເທດຂອງທະນາຄານທຸລະກິດ ຈຳນວນ 134,39 ລ້ານໂດລາສະຫະລັດ.

### 3. ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ

– ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 12/12/2016 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 60.345,10 ຕື້ກີບ, ເມື່ອທຽບໃສ່ເດືອນຜ່ານມາເພີ່ມຂຶ້ນ 1,08%. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 1,20% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 49,01% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ເພີ່ມຂຶ້ນ 0,96% ຊຶ່ງກວມເອົາ 51,99% ຂອງເງິນຝາກທັງໝົດ;

– ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 11/12/2016 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 60.203,33 ຕື້ກີບ ເພີ່ມຂຶ້ນ 2,98% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບກວມເອົາ 48,09% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 51,91% ຂອງສິນເຊື່ອທັງໝົດ;

– ໃນເດືອນ **12/2016** ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 59,80 ຕື້ກີບ ທຽບໃສ່ເດືອນຜ່ານມາຫຼຸດລົງ 83,07 ຕື້ກີບ ເທົ່າກັບ 28,01%, ເກັບຕົ້ນທຶນໄດ້ 23,67 ຕື້ກີບ ທຽບໃສ່ເດືອນຜ່ານມາຫຼຸດລົງ 19,02% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້), ການຄ້າ ແລະ ປະກອບວັດຖຸເຕັກນິກ. ຍອດສິນເຊື່ອຮອດທ້າຍເດືອນ 12/2016 ມີຈຳນວນ 2.936,92 ຕື້ກີບ ເທົ່າກັບ 97,22% ຂອງແຜນການປີ (3.048,54 ຕື້ກີບ). ໃນນີ້, ສິນເຊື່ອຢູ່ເມືອງເປົ້າໝາຍ 1.960,76 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 280,44 ຕື້ກີບ, ບ້ານເຣັດທົດລອງ 3 ສ້າງ 288,80 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 433,92 ຕື້ກີບ;

– ຍອດເຫຼືອໜີ້ຕ້ອງຮັບທວງຍາກ[3] (**NPL**) ຂອງທະນາຄານທຸລະກິດທົ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 11/2016 ມີຈຳນວນ 2.537,25 ຕື້ກີບ ຫຼຸດລົງ 39,98 ຕື້ກີບ ຫຼື ຫຼຸດລົງ 1,55% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 3,50% ຂອງຍອດເຫຼືອສິນເຊື່ອທັງໝົດ.

### 4. ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ

#### **4.1.** ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີຈຳນວນ 3.878 ສະບັບ ຫຼຸດລົງ 1,12% ເປັນເງິນຈຳນວນ 1.735,43 ຕື້ກີບ ຫຼຸດລົງ 14,87% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບ

---

3 ໃນເດືອນ 12/2016 ການແກ້ໄຂ NPL ຍັງບໍ່ສາມາດລາຍງານໄດ້ ເນື່ອງຈາກລະບົບເກັບກຳຂໍ້ມູນໄດ້ບໍ່ຄົບຖ້ວນ.

ມີມູນຄ່າສູງໃນເດືອນນີ້ມີຈຳນວນ 140 ຄັ້ງ ເພີ່ມຂຶ້ນ 9,37% ເມື່ອທຽບໃສ່ເດືອນຜ່ານມາ ມີມູນຄ່າການໂອນ 725,18 ຕື້ກີບ ເພີ່ມຂຶ້ນ 16,31% ເມື່ອທຽບໃສ່ເດືອນຜ່ານມາ; ສຳລັບການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນ ທີ 25/11/2016-24/12/2016 ມີຈຳນວນ 10.230 ຄັ້ງ ລາຍລະອຽດມີດັ່ງນີ້:

– **ສະກຸນເງິນກີບ:** ມີການເຄື່ອນໄຫວ 9.795 ຄັ້ງ ມີມູນຄ່າການໂອນ 2.263,72 ຕື້ກີບ ເພີ່ມຂຶ້ນ 7,42% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 2.627 ຄັ້ງ. ໃນນັ້ນມີທະນາຄານທີ່ເຮັດທຸລະກຳທັງໝົດ 34 ທະນາຄານ ແລະ Bconnex;

– **ສະກຸນເງິນບາດ:** ມີການເຄື່ອນໄຫວ MT 202 ຈຳນວນ 1 ຄັ້ງ ມີມູນຄ່າການໂອນ 50.000.000 ບາດ;

– **ກະຊວງການເງິນ:** ມີການເຄື່ອນໄຫວ ຈຳນວນ 434 ຄັ້ງ ມີມູນຄ່າການໂອນ 339,91 ຕື້ກີບ;

– **ສະກຸນເງິນໂດລາສະຫະລັດ ແລະ ເງິນບາດ:** ບໍ່ມີການເຄື່ອນໄຫວ.

4.2 <u>ການຊື້-ຂາຍພັນທະບັດ</u>

– ໃນເດືອນ 12/2016 ພັນທະບັດກະຊວງການເງິນບ້ວງລະດົມທຶນ ຜ່ານ ທຫລ (ບ້ວງ ທຫລ ບໍ່ຄ້ຳປະກັນ) ມີການຈຳໜ່າຍ ຈຳນວນ 20 ຕື້ກີບ ຊຶ່ງປະກອບດ້ວຍ: ທະນາຄານພົງສະຫວັນ ຈຳນວນ 10 ຕື້ກີບ ແລະ ກອງທຶນປົກປ້ອງຜູ້ຝາກເງິນ ຈຳນວນ 10 ຕື້ກີບ;

– ພັນທະບັດຂອງກະຊວງການເງິນ ມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 6.457,80 ຕື້ກີບ ແລະ 90 ລ້ານໂດລາສະຫະລັດ (ບ້ວງລະດົມທຶນ ທທກ ໂດຍກົງ 554 ຕື້ກີບ ແລະ 90 ລ້ານໂດລາສາຫະລັດ, ພັນທະບັດບ້ວງລ້າງໜີ້ 3.608,80 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທຫລ ຈຳນວນ 2.275 ຕື້ກີບ);

– ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 12/2016 ບໍ່ມີການເຄື່ອນໄຫວ, ປະຈຸບັນ ມີຍອດເຫຼືອພັນທະບັດບໍ່ໄດ້ຖອນທັງໝົດ ຈຳນວນ 354 ລ້ານໂດລາສະຫະລັດ.

5. <u>ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

– ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ ປິດຢູ່ທີ່ 1.012,72 ຈຸດ ຫຼຸດລົງ 0,27% ເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານຊື້-ຂາຍຮຸ້ນທັງໝົດ 362.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,80 ຕື້ກີບ ຫຼຸດລົງ 96,18% ທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.036 ກີບ/ຮຸ້ນ ຫຼຸດລົງ 97 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 139.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 700,55 ລ້ານກີບ ເພີ່ມຂຶ້ນ 207,37% ເມື່ອທຽບໃສ່ເດືອນຜ່ານມາ[4];

– ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.005 ກີບ/ຮຸ້ນ ເພີ່ມຂຶ້ນ 34 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 211.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,06 ຕື້ກີບ ຫຼຸດລົງ 97,75% ເມື່ອທຽບໃສ່ເດືອນຜ່ານມາ[5];

– ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 5.408 ກີບ/ຮຸ້ນ ຫຼຸດລົງ 692 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 6.100 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 32,99 ລ້ານກີບ ເພີ່ມຂຶ້ນ 170,41% ທຽບໃສ່ເດືອນຜ່ານມາ[6];

---

[4] ສັດສ່ວນການຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%.

[5] ສັດສ່ວນການຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%.

[6] ສັດສ່ວນການຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

– ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.500 ກີບ/ຮຸ້ນ ຊຶ່ງລາຄາຮຸ້ນແມ່ນບໍ່ມີການປ່ຽນແປງເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 5.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 14 ລ້ານກີບ ເພີ່ມຂຶ້ນ 300% ທຽບໃສ່ເດືອນຜ່ານມາ[7];

– ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.000 ກີບ/ຮຸ້ນ ຊຶ່ງລາຄາຮຸ້ນແມ່ນບໍ່ມີການປ່ຽນແປງ ເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານການຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,3 ລ້ານກີບ[8].

6. <u>ວຽກງານພົ້ນເດັ່ນອື່ນໆ</u>

– ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 348,77 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 23% ທຽບໃສ່ເດືອນຜ່ານມາ. ໃນນັ້ນມີ 291,68 ລ້ານໂດລາສະຫະລັດ (ກວມເອົາ 84% ຂອງເງິນທັງໝົດ); 1,71 ຕື້ບາດ; 42.985 ເອີໂຣ; 15.630 ຝຣັ່ງສະວິດ; 12.435 ປອນສະເຕີຣິງ; 9,78 ລ້ານເຢັນ; 71.205 ໂດລາການາດາ; 0,1 ລ້ານໂດລາອົດສະຕາລີ; 1.570 ໂດລານິວຊີແລນ; 5.000 ໂຄຣນາສະວີເດັນ; 41 ຣິງກິດ ແລະ 1.000 ກຣອນເດັນນິດ;

– ສຳເລັດການມອບ-ຮັບໃບອະນຸຍາດດຳເນີນທຸລະກິດຖາວອນ ໃຫ້ແກ່ ສກຈບ ທົ່ງຄຳ ແລະ ບໍລິສັດເຊົ່າສິນເຊື່ອດີຈີບີ; ສຳເລັດການອອກໃບອະນຸຍາດດຳເນີນທຸລະກິດຊົ່ວຄາວ ໃຫ້ແກ່ ສກຈບ ຈະເລີນຊັບ, ຍອດທົ່ງ ແລະ ວາລີລັກ;

– ໃນເດືອນ 12/2016 ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ ຈາກທະນາຄານທຸລະກິດ ຈຳນວນ 28 ສະບັບ ເຊິ່ງຮອດປະຈຸບັນ STR ລວມທັງໝົດມີ 495 ສະບັບ.

## <u>ພາກທີ II</u>
## <u>ວຽກງານຈຸດສຸມໃນເດືອນຕໍ່ໄປ</u>

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາ ຄານເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດ ຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ, ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິ ຫານ ຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ,ສົ່ງເສີມການນຳໃຊ້ເງິນກີບ ແລະການຊຳລະໂດຍບໍ່ໃຊ້ເງິນສົດ, ສືບຕໍ່ລົງກວດກາຕິດຕາມ ສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ຫັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

---

[7] ສັດສ່ວນການຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[8] ສັດສ່ວນການຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນ ບໍ່ມີກຳນົດ.

- ຈັດປາຖະກະຖາເອກະສານສຳຄັນຕ່າງໆຂອງຊາດ; ຈັດພິທີມອບຮັບໃບຍ້ອງຍໍ ແລະ ຊົມເຊີຍ ປະຈຳປີ 2014-2015; ຈັດພິທີມອບຮັບໃບຍ້ອງຍໍພະນັກງານທີ່ໄດ້ປະກອບສ່ວນໃນກອງປະຊຸມຂັ້ນສູງວຽກງານການເງິນ-ທະນາຄານ ກາງອາຊຽນ;
- ສືບຕໍ່ກະກຽມບົດສະຫຼຸບການເຄື່ອນໄຫວຂອງ ທຫລ ປະຈຳປີ 2016 ແລະ ທິດທາງແຜນການ ປີ 2017;
- ສືບຕໍ່ປະເມີນການກໍ່ສ້າງພັກເຂັ້ມແຂງຮູ້ນຳພາຮອບດ້ານ ປະຈຳປີ 2016;
- ຈັດສຳມະນາຮ່ວມກັນລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ອົງການ IFC ໃນຫົວຂໍ້: ລະບົບການລາຍງານຂໍ້ມູນຂ່າວສານສິນເຊື່ອ;
- ກະກຽມຈັດກອງປະຊຸມຕ່າງໆ ເຊັ່ນ: ກອງປະຊຸມວຽກງານການຄຸ້ມຄອງກວດກາທະນາຄານປະຈຳປີ 2016; ກອງປະຊຸມສະພາບໍລິຫານຕະຫຼາດຫຼັກຊັບລາວ; ກອງປະຊຸມສອງຝ່າຍລະຫວ່າງ ທຫລ ແລະທະນາຄານແຫ່ງລັດຫວຽດນາມ.
- ສືບຕໍ່ລົງຕິດຕາມມາດຕະການຊົ່ວຄາວ 2 ທະນາຄານທຸລະກິດລັດ (ທະນາຄານ ພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ);
- ຈັດພິທີມອບ-ຮັບ ໃບອະນຸຍາດດຳເນີນທຸລະກິດຖາວອນ ໃຫ້ແກ່ບໍລິສັດ ວຽງຈັນ ເຊົ່າສິນເຊື່ອຈຳກັດ; ສກຈບ ອາລີພັດທະນາ; ສກຈບ ແອວແອນແອວ ແລະ ວີແອລວີ;
- ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ
ຜູ້ວ່າການ

ດຣ ສົມພາວ ໄຟສິດ

ສົ່ງ:

- ຄະນະຜູ້ວ່າການ ທຫລ.
- ຜູ້ຊ່ວຍຜູ້ວ່າການ ທຫລ.
- ຫ້ອງວ່າການ ສູນກາງພັກ.
- ຫົວໜ້າກົມຄົ້ນຄວ້າສັງລວມ ສຳນັກງານປະທານປະເທດ.
- ຫົວໜ້າກົມກົມສັງລວມເສດຖະກິດ, ສນຍ.
- ຫ້ອງການກະຊວງແຜນການ ແລະ ການລົງທຶນ.
- ຫ້ອງການກະຊວງການເງິນ.
- ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ.
- ຄະນະຫ້ອງການ ທຫລ.
- ສຳເນົາ.